ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ: 382/ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 03 ມີນາ 2025

# ແຈ້ງການ

ເຖິງ: ຜູ້ອຳນວຍການທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ຜູ້ໃຫ້ບໍລິການຊໍາລະເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການເພີ່ມທະວີຄວາມເອົາໃຈໃສ່ໃນການພົວພັນທຸລະກິດກັບທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີເທົາ ແລະ ບັນຊີດຳ ທີ່ອົງການຕ້ານການຟອກເງິນສາກົນ.

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ສະບັບເລກທີ 64/ສພຊ ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 18/ຄຕຟງ, ລົງວັນທີ 10 ຕຸລາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ມາດຕະການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ (ສະບັບປັບປຸງ) ສະບັບເລກທີ 10/ຄຕຟງ, ລົງວັນທີ 25 ສິງຫາ 2021.

ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ຜູ້ໃຫ້ບໍລິການຊໍາລະເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃນຂອບເຂດທົ່ວປະເທດ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໂດຍນຳໃຊ້ມາດຕະການທີ່ເໝາະສົມ ໃນການຊອກຮູ້ ຫຼື ລະມັດລະວັງ ໃນເວລາໃຫ້ບໍລິການ, ເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດໃດໜຶ່ງ ກັບສະຖາບັນການເງິນ ແລະ ທະນາຄານທຸລະກິດ ທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີເທົາ ແລະ ບັນຊີດຳ ຂອງອົງການຕ້ານການຟອກເງິນສາກົນ (Financial Action Task Force "FATF") ຕາມຜົນກອງປະຊຸມຄົບຄະນະຂອງ FATF ໃນລະຫວ່າງວັນທີ 17-21 ກຸມພາ 2025. ຊຶ່ງເປັນບັນດາປະເທດທີ່ມີຂໍ້ບົກຜ່ອງໃນດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອປ້ອງກັນບໍ່ໃຫ້ ທະນາຄານທຸລະກິດ, ສະຖາບັນ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ການເງິນທີ່ບໍ່ແມ່ນທະນາຄານ, ຜູ້ໃຫ້ບໍລິການຊໍາລະເງິນຂອງ ສປປ ລາວ ຕົກເປັນເຄື່ອງມືຂອງອາຊະຍາກໍາ ຫຼື ເປັນແຫຼ່ງຂອງການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ດັ່ງມີລາຍລະອຽດຂອງລາຍຊື່ປະເທດຕ່າງໆ ທີ່ນອນໃນບັນຊີເທົາ ແລະ ບັນຊີດໍາ ຂອງ FATF ແມ່ນໃຫ້ເຂົ້າເບິ່ງຕາມເວບໄຊ ດັ່ງນີ້:

1. https://www.fatf-gafi.org/en/publications/High-risk-and-other-monitored-jurisdictions/increased-monitoring-february-2025.html;
2. https://www.fatf-gafi.org/en/publications/High-risk-and-other-monitored-jurisdictions/Call-for-action-february-2025.html.

ກໍລະນີ ຫາກມີການໃຫ້ບໍລິການ, ເຮັດທຸລະກໍາ ຫຼື ສ້າງສາຍພົວພັນທຸລະກິດໃດໜຶ່ງ ກັບສະຖາບັນການເງິນ ແລະ ທະນາຄານທຸລະກິດ ທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີດັ່ງກ່າວ ແມ່ນໃຫ້ປະຕິບັດຕາມ ມາດຕາ 34 (ມາດຕະການສໍາລັບປະເທດທີ່ມີຄວາມສ່ຽງ) ຂອງຂໍ້ຕົກລົງວ່າດ້ວຍ ມາດຕະການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສໍາລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ (ສະບັບປັບປຸງ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເພີ່ມທະວີຄວາມເອົາໃຈໃສ່ຕາມເນື້ອໃນຈິດໃຈຂ້າງເທິງນີ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ວ່າການຫົວໜ້າສໍານັກງານຂໍ້ມູນຕ້ານການຟອກເງິນ

ວິນຄໍາ ລຸນທອນ

❖ <u>ຕິດຕໍ່ປະສານງານ:</u> ສໍານັກງານຂໍ້ມູນຕ້ານການຟອກເງິນ ໂທ: 021262277 ແລະ 021 264624.